LAOTIAN

# ໂຄງການການຜັນປ່ຽນ ທິດທາງອາຊຍາກັມ–ຢາເສບຕິດ

# Drug-Crime Diversion

ເຈັ້ຍຂໍ້ມູນ ■ ສິງຫາ 2002

## ທຳລາຍກົງລໍ້ຂອງຢາເສບຕິດ ແລະ ອາຊຍາກັມ

ມັນມີສິ່ງເຊື່ອມຕໍ່ ອັນສຳຄັນລະຫວ່າງການໃຊ້ຢາເສບຕິດ ແລະ ອາຊຍາກັມ. ພວກທີ່ ໃຊ້ຢາເສບຕິດ ຫລາຍໆຄົນ ອາໃສ ອາຊຍາກັມ ເພື່ອໄດ້ເງິນມາໃຊ້ຈ່າຍ ໃນການໃຊ້ຢາ ນັ້ນ (ຕົວຢ່າງ ການລັກ ເຄື່ອງຂອງ).

ໂຄງການຜັນປ່ຽນທິດທາງຢາເສບຕິດ–ອາຊຍາກັມ (Drug-Crime Diversion) ນີ້ ອຳນວຍໂອກາດໃຫ້ແກ່ພວກທີ່ກະທຳຜິດທີ່ໃຊ້ຢາເສບຕິດ ໄດ້ຮັບການປິ່ນປົວ ແລະ/ຫລື ຮັບການສຶກສາ ທີ່ແນໃສ່ ການຊ່ວຍໃຫ້ ພວກເຂົາເຊົາໃຊ້ ຢາເສບຕິດ ແລະ ການກໍ່ອາຊຍາກັມຕໍ່ໄປອີກ.

ດ້ວຍການເລັງໃສ່ ອາຊຍາກັມກ່ຽວກັບຢາເສບຕິດ ທີ່ບໍ່ຫນັກຫນາປານໃດ, ໂຄງການນີ້ ມີເປົ້າຫມາຍ ໃນການປ້ອງກັນ ບໍ່ໃຫ້ພວກໃຊ້ຢາເສບຕິດຮຸ່ນໃຫມ່ ມີໂອກາດ ກໍ່ອາຊຍາກັມທີ່ພົວພັນກັບຢາເສບຕິດອີກ.

**ໂຄງການຜັນປ່ຽນທິດທາງນີ້ ຈະບໍ່ປ່ຽນແປງ ສະຖານະພາບຂອງກົດຫມາຍກ່ຽວກັບຢາເສບຕິດ ແຕ່ຢ່າງໃດ. ການມີຢາທີ່ຜິດກົດຫມາຍ ແລະການໃຊ້ ກໍຍັງເປັນການກະທຳຜິດທາງໂທດອາຍາຄືເກົ່າ.**

ໂດຍຜ່ານຄວາມຄິດຜັນປ່ຽນທິດທາງຂອງຢາທີ່ຜິດກົດຫມາຍ (Illicit Drug Diversion Initiative), ຣັຖບານກາງ ພວມເຮັດວຽກຮ່ວມກັບ ທຸກໆຣັຖແລະທຸກໆອານາເຂດ ເພື່ອຈະກໍ່ຕັ້ງວິທີປະຕິບັດ ໂຄງການຜັນປ່ຽນທິດທາງຢາເສບຕິດ – ອາຊຍາກັມ ທົ່ວປະເທດ.

**ໂຄງການຜັນປ່ຽນທິດທາງຢາເສບຕິດ-ອາຊຍາກັມຈະຊ່ວຍຊຸມຊົນໄດ້ຢ່າງໃດ?**

- ເຊື່ອມຕໍ່ໂຄງການສຶກສາເຣື່ອງຢາເສບຕິດ ແລະ ການປິ່ນປົວໄປຫາຣະບົບຄວາມຍຸຕິທັມ ເພື່ອໃຫ້ຄວາມຫມັ້ນໃຈ ເພື່ອຈະໄດ້ຢູ່ກັບການປິ່ນປົວຕໍ່ໄປ
- ບໍຣິການ ການປິ່ນປົວ ແກ່ຜູ້ທີ່ມີບັນຫາຢາເສບຕິດ ເພື່ອຊ່ວຍປ້ອງກັນອາຊຍາກັມ
- ໂຄງການຕ່າງໆ ທີ່ຊຸກຍູ້ໃຫ້ຜູ້ມາຮ່ວມຮັບຜິດຊອບ ໃນການໃຊ້ຢາເສບຕິດ ແລະອາຊຍາກັມ ທີ່ພົວພັນນຳ ຂອງພວກເຂົາເຈົ້າ
- ເຮັດໃຫ້ ຈຳນວນຄົນທີ່ຕ້ອງໄປຂຶ້ນສານ ໃນຂໍ້ຫາສະຖານເບົາກ່ຽວກັບຢາເສບຕິດຫລຸດຫນ້ອຍລົງ.

## ມີຫຍັງແດ່ທີ່ພວມເຮັດກ່ຽວກັບການຜັນປ່ຽນທິດທາງຢາເສບຕິດ-ອາຊຍາກັມໃນຣັຖນຊວ?

ຢູ່ໃນຣັຖ ນຊວ ນີ້ ມີໂຄງການຜັນປ່ຽນທິດທາງຢາເສບຕິດ–ອາຊຍາກັມຢູ່ຫ້າໂຄງການ ທີ່ພວມດຳເນີນ ຢູ່. ບາງໂຄງການແມ່ນສຳລັບ ທົ່ວຣັຖ, ແລະໂຄງການອື່ນໆ ນັ້ນພຽງແຕ່ເປັນ ການທົດລອງ ຢູ່ໃນ ບາງເຂດສະເພາະເທົ່ານັ້ນ. ພວກໂຄງການເຫລົ່ານີ້ພວມ ຖືກດັດແປງ ເພື່ອໃຫ້ເຫມາະສົມກັບຄວາມຕ້ອງການ ຂອງຊຸມຊົນໃນ ແຕ່ລະເຂດ ແລະ ແຕ່ລະທ້ອງຖິ່ນ.

ແຕ່ລະໂຄງການ ແນໃສ່ຜູ້ກະທຳຄວາມຜິດ ຕາມຂັ້ນຕ່າງໆ ຂອງລະບົບຄວາມຍຸຕິທັມ. ການປ້ອງກັນ ໃນຂັ້ນຕົ້ນ ແມ່ນຈຸດສຳຄັນ ສຳລັບຜູ້ກະທຳຜິດສະຖານເບົາ ທີ່ກ່ຽວພັນກັບ ອາຊຍາກັມຫນ້ອຍ. ສຳລັບຜູ້ກະທຳຄວາມຜິດ ທີ່ມີບັນຫາ ເຣື່ອງຢາເສບຕິດ ທີ່ຫນັກຫນາຈະເຂົ້າຢູ່ໃນ ໂຄງການທີ່ມີການຄວບຄຸມອັນກວດຂັນ.

ຜູ້ທີ່ເຂົ້າຮ່ວມໃນໂຄງການທັງຫລາຍນີ້ ຕ້ອງເຮັດຕາມຄວາມຕ້ອງການຂອງໂຄງການທຸກໆຢ່າງຊຶ່ງອາດຈະຮວມເຖິງ ກົດລະບຽບທີ່ເຄັ່ງຄັດ ແລະ ຖືກຄວບຄຸມ.

ໂຄງການການຜັນປ່ຽນທິດທາງຢາເສບຕິດ–ອາຊຍາກັມ ທຸກໆໂຄງການຖືກຄວບຄຸມ ແລະປະເມີນຜົນງານເບິ່ງ. ຖ້າຫາກວ່າມີຫລັກຖານສະແດງໃຫ້ ເຫັນວ່າ ໂຄງການນີ້ ມີປະສິດທິຜົນ ມັນກໍຈະຖືກ ນຳມາພິຈາຣະນາເບິ່ງ ເພື່ອການນຳໄປໃຊ້ ຕໍ່ໄປອີກໃນຣັຖ ນຊວ. ຖ້າຫາກວ່າໂຄງການນີ້ ບໍ່ມີ ປະສິດທິຜົນ ມັນກໍຈະບໍ່ຖືກໃຊ້ອີກຕໍ່ໄປ.

## 1. ການປ່ຽນແປງໃນກົດຫມາຍຜູ້ເຍົາວັຍທີ່ກະທຳຜິດ* (Young Offenders Act*)

ໃນເດືອນເມສາ (4) 2000 ກົດຫມາຍຜູ້ເຍົາວັຍ ທີ່ກະທຳຄວາມຜິດ ໄດ້ຖືກດັດແປງ ເພື່ອຮວມ ເອົາການກະທຳຜິດ ກ່ຽວກັບຢາເສບຕິດສະຖານເບົາ (ຕົວຢ່າງ ການມີຢາເສບຕິດ ປະຣິມານນ້ອຍ ໃນຄວາມຄອບຄອງ) ຊຶ່ງ ຜູ້ເຍົາວັຍໄດ້ກະທຳຜິດເຂົ້ານຳ.

ການປ່ຽນແປງນີ້ ອຳນວຍໃຫ້ຜູ້ກະທຳຜິດ ເຣື່ອງຢາເສບຕິດສະຖານເບົາ ໄດ້ຮັບຄວາມຊ່ວຍເຫລືອ ແລະ ແນໃສ່ ການຢຸດຢັ້ງ ພວກເຂົາບໍ່ໃຫ້ກະທຳຜິດອີກ. ການປ່ຽນແປງ ນີ້ແມ່ນໃຊ້ໄດ້ທົ່ວໄປໃນ ທຸກໆເຂດ ຂອງຣັຖ ນຊວ.

ການມີຢາເສບຕິດ ໃນຄວາມຄອບຄອງ ເປັນການຜິດກົດຫມາຍ. ໃນບາງກໍຣະນີ ກົດຫມາຍຜູ້ເຍົາວັຍ ມີຫລາຍທາງໃຫ້ເລືອກແທນ ການໄປຂຶ້ນສານ ແຕ່ວ່າ ໃນທຸກໆກໍຣະນີ ຕຳຣວດຍັງເປັນ ຜູ້ຕັດສິນໃຈ ໃນການຈະເອົາຜິດນຳ ຜູ້ກະທຳຜິດ ທັງຫລາຍ ຫລືບໍ່.

ສຳລັບ ຜູ້ເຍົາວັຍ ທີ່ຖືກສົງໃສ ວ່າຈັດຫາ ຫລື ຄ້າຢາເສບຕິດ ທາງການ ຈະບໍ່ເອົາມາດຕາການ ຕາມກົດຫມາຍ ສບັບດັ່ງກ່າວ. ພວກເຂົາ ຈະຖືກຕິດຄະດີໄວ້. ຕຳຣວດ ເຮັດຕາມຕົວບັດກົດຫມາຍ ຢ່າງເຄັ່ງຄັດ ໃນການຕັດສິນໃຈວ່າຈະໃຊ້ ມາດຕາການ ກົດຫມາຍ ຜູ້ເຍົາວັຍ ນີ້ໃນເວລາໃດ ແລະ ແບບໃດ.

### ທາງການ ຈະເອົາ ມາດຕາການ ຕາມກົດຫມາຍນີ້ ນຳຜູ້ເຍົາວັຍ ທີ່ກະທຳຄວາມຜິດ ແບບໃດ?

ກົດຫມາຍນີ້ໃຊ້ກັບ ພວກຜູ້ເຍົາວັຍ ຊຶ່ງຖືກຕຳຣວດຈັບ ໃນຖານກະທຳຄວາມຜິດຫລາຍໆຢ່າງ ຮວມເຖິງ

- ການມີຢາຜິດກົດຫມາຍ ປະຣິມານນ້ອຍ ຢູ່ໃນຄວາມຄອບຄອງ
- ການມີເຄື່ອງມືສຳລັບ ການໃຊ້ຢາເສບຕິດ ຢູ່ໃນຄວາມຄອບຄອງ ຫລື

- ກໍ່ການກະທຳຜິດ ກ່ຽວກັບຢາເສບຕິດ ອື່ນໆອີກ[ø].

ຜູ້ເຍົາວັຍທີ່ກະທຳຜິດຄົນນຶ່ງ ອາດຈະ*ໄດ້ຮັບຄຳເຕືອນ (warning)* ຫລື *ການຕັກເຕືອນ (caution)* ຫລືອາດຈະຖືກສົ່ງໄປຫາ *ການປະຊຸມເພື່ອຄວາມຍຸຕິທັມຜູ້ເຍົາວັຍ (youth justice conference).*

ເຈົ້າຫນ້າທີ່ຕຳຣວດ ອາດຈະໃຫ້ ຄຳເຕືອນ ທັງຫລາຍ ສຳລັບ ການກະທຳຜິດ ທີ່ບໍ່ຫນັກຫລາຍ ແລະ ບໍ່ກ່ຽວພັນ ກັບຄວາມຮຸນແຮງນັ້ນ. ຕຳຣວດອາດໃຫ້ ຄຳເຕືອນ ໃຫ້ແກ່ ຜູ້ເຍົາວັຍ ຕາມຖນົນ ໄດ້ ໂດຍບໍ່ຈຳເປັນວ່າຄົນຜູ້ນັ້ນ ຕ້ອງສາຣະພາບຕໍ່ການກະທຳຜິດໃດໆ. ຕຳຣວດ ຈະບັນທຶກຣາຍລະອຽດ ກ່ຽວກັບ ຜູ້ເຍົາວັຍ ແລະການກະທຳຜິດ ຂອງລາວໄວ້.

*ການຕັກເຕືອນ* ແມ່ນຂັ້ນຕອນ ທີ່ເປັນທາງການ ທີ່ຜູ້ເຍົາວັຍຖືກຈັບ ແລະຮັບສາຣະພາບ ຮັບຜິດ. ໃນເວລາທີ່ມີ ການຕັກເຕືອນນັ້ນ ຜູ້ເຍົາຈະມີພໍ່ຫລືແມ່/ຜູ້ດູແລ ແລະ ອາດຈະ ມີພະນັກງານ ກ່ຽວກັບ ເຫລົ້າ ແລະ ຢາເສບຕິດ ມານຳ. ຜູ້ເຍົາ ຈະເຊັນຊື່ ໄວ້ໃນໃບແຈ້ງການຕັກເຕືອນຢ່າງເປັນ ທາງການ. ເຂົາຈະໄດ້ຮັບຂໍ້ມູນກ່ຽວ ກັບສິ່ງທີ່ຈະມີຕາມມາໃນດ້ານກົດຫມາຍ ແລະ ດ້ານສຸຂະພາບ ຈາກການໃຊ້ຢາເສບຕິດ ແລະຂໍ້ມູນກ່ຽວກັບ ການປິ່ນປົວ ແລະ ບໍຣິການການໃຫ້ຄຳປຶກສາ.

ຖ້າຫາກວ່າ ສະຖານະການຮ້າຍແຮງກວ່າທີ່ກ່າວມານັ້ນ, ທາງການອາດຈະຈັດໃຫ້ມີການປະຊຸມ ເພື່ອຄວາມຍຸຕິທັມຜູ້ເຍົາວັຍ. ຕຳຣວດ ແລະ/ຫລືສາລ ສາມາດ ແນະນຳ ສົ່ງຜູ້ກະທຳຜິດ ໄປຫາການປະຊຸມດັ່ງກ່າວ. ການປະຊຸມນີ້ ຈະມີຜູ້ປະສານງານ ທີ່ໄດ້ຮັບການຝຶກຝົນມາແລ້ວ ຈາກກະຊວງຍຸຕິທັມຜູ້ເຍົາວັຍ (Department of Juvenile Justice) ເປັນຜູ້ດຳເນີນການ.

ໃນຂະນະທີ່ຢູ່ໃນ ການປະຊຸມນີ້ ຜູ້ເຍົາວັຍທີ່ກະທຳຄວາມຜິດ ຈະຖືກນຳມາພົບກັບ ຜູ້ທີ່ໄດ້ຮັບ ຄວາມກະທົບກະເທືອນຢ່າງຫນັກຈາກການກະທຳຂອງຜູ້ກະທຳຜິດ. ແຕ່ລະຝ່າຍ ມີຜູ້ຊ່ວຍອູ້ມຊູ ມານຳ. ຜູ້ເຍົາວັຍ ຈະຖືກຂໍໃຫ້ອະທິບາຍ ການກະທຳຂອງເຂົາ ແລະ ຮັບຜິດຊອບຕໍ່ການກະທຳນັ້ນ. ຜູ້ເຍົາ ແລະ ຜູ້ໄດ້ຮັບເຄາະ ຈະຕົກລົງກັນຕໍ່ແຜນທີ່ເຫມາະສົມທີ່ ຜູ້ເຍົາວັຍ ນີ້ຕ້ອງປະຕິບັດຕາມ ຈົນຈົບ. ແຜນນີ້ແມ່ນຈັດຂຶ້ນເພື່ອ ໃຫ້ເຫມາະສົມ ກັບບັນຫາຢາເສບຕິດ ແລະບັນຫາອື່ນໆ ທີ່ເຮັດໃຫ້ ຜູ້ເຍົາ ຕ້ອງມີຄວາມປະພຶດ ໄປໃນທາງອາຊຍາກັມ. ແຜນນີ້ອາດຈະຮວມເຖິງ ການປິ່ນປົວ ແລະ ການປຶກສາຫາລື. ທາງການຈະຕິດຕາມເບິ່ງຄວາມກ້າວຫນ້າຂອງຂອງແຜນນີ້.

ຖ້າຫາກ ແຜນນີ້ ຈົບສົມບູນແລ້ວ ທາງການອາດຈະ ບໍ່ດຳເນີນຄະດີຕໍ່. ຖ້າບໍ່ດັ່ງນັ້ນ ເຣື່ອງນີ້ກໍຈະກັບໄປຫາຕຳຣວດ ຫລື ໄປຂຶ້ນສາລ.

*ເພື່ອເອົາຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ຫາ Department of Juvenile Justice. ເບີໂທຣະສັບ: (02) 9289 3319.*

[ø] ການກະທຳຜິດສະຖານເບົາຈະຖືກສົ່ງໄປຫາສາລທ້ອງຖິ່ນ.

*ນິກກີ, ເດັກຍິງອາຍຸ 15 ປີ ຖືກຈັບເຣື່ອງລັກຂອງ ແລະມີເຮໂຣອິນປະຣິມານນ້ອຍ ໃນຄວາມ ຄອບຄອງ. ຕຳຣວດ ສຳພາດນິກກີ ແລະເນື່ອງຈາກອາຍຸຂອງລາວ ເຈົ້າຫນ້າທີ່ຕຳຣວດ ພົວພັນກັບ ຊາວຫນຸ່ມ (Police Youth Liaison Officer – YLO) ຈຶ່ງໄດ້ເຂົ້າ ມາຊ່ວຍໃນການສຳພາດ. ໃນລະຍະ ການສຳພາດນັ້ນ ເປັນທີ່ຈະແຈ້ງວ່າການລັກຂອງ ນັ້ນແມ່ນເພື່ອຂາຍ ແລະເອົາໄປຊື້ຢາ ເສບຕິດ. ຫລັງຈາກການສຳພາດ ເຈົ້າຫນ້າທີ່ YLO ໄດ້ລົມກັບນິກກີ ແລະແມ່ຂອງລາວ ເຖິງທາງເລືອກ ຂອງການປິ່ນປົວ ບັນຫາຢາເສບຕິດ.*

*ຫລັງຈາກ ທີ່ໄດ້ພິຈາຣະນາ ເບິ່ງວ່າ ຈະຈັດການກັບ ນິກກີ ດ້ວຍກົດຫມາຍຜູ້ເຍົາວັຍ ຫລືບໍ່, ເຈົ້າຫນ້າທີ່ YLO ໄດ້ ຕັດສິນໃຈວ່າ ນິກກີມີສິດທີ່ຈະ ໄດ້ຮັບ ການຕັກເຕືອນ ສຳລັບການກະທຳຜິດເຫລົ່ານີ້. ເນື່ອງຈາກວ່ານີ້ເປັນການ ກະທຳຜິດ ເລັກນ້ອຍ ແລະເປັນຄັ້ງທຳອິດຕຳຣວດຈຶ່ງໄດ້ຕັດສິນໃຈ ການຕັກເຕືອນ. ເຈົ້າຫນ້າທີ່ YLO ຍັງຕິດຕໍ່ ພົວພັນກັບ ຄອບຄົວຂອງນິກກີ ໃນລະຍະເວລາ ການສຳພາດແລະການໃຫ້ການຕັກເຕືອນ ຂອງຕຳຣວດ. ພາຍໃນລະຍະນັ້ນ ນິກກີກໍຍັງສືບຕໍ່ການ ໃຊ້ຢາເສບຕິດ ຂອງລາວຢູ່.*

*ໃນຣະຫວ່າງ ການຕັກເຕືອນ, ນິກກີໄດ້ຍອມຮັບ ວ່າການປິ່ນປົວຢາເສບຕິດນີ້ ເປັນສິ່ງທີ່ ລາວສົນໃຈທີ່ສຸດ. ເຈົ້າຫນ້າທີ່ YLO ໄດ້ຕິດຕໍ່ຫາ ໂຄງການບ່ອນພັກ ຂອງຜູ້ເຍົາວັຍ ແລະ ນິກກີກໍໄດ້ໄປຢູ່ບ່ອນນັ້ນ. ລາຍງານທຸກໆອັນ ບົ່ງບອກວ່າ ການປິ່ນປົວພວມເປັນໄປດ້ວຍດີ.*

*ມັນເປັນ ຄວາມຫວັງວ່າການປິ່ປົວນີ້ຈະຊ່ວຍໃຫ້ ນິກກີສາມາດຈັດຊີວິດຂອງລາວ ໂດຍບໍ່ຕ້ອງກັບໄປ ກະທຳຄວາມຜິດ ຫລືໃຊ້ຢາເສບຕິດອີກ.*

## 2. ໂຄງການການຕັກເຕືອນເຣື່ອງການຊາສຳລັບຜູ້ໃຫຍ່* (Adult Cannabis Cautioning Scheme*)

ໂຄງການການຕັກເຕືອນເຣື່ອງກັນຊາສຳລັບຜູ້ໃຫຍ່ ນີ້ໄດ້ຖືກນຳມາ ໃຊ້ໂດຍຣັຖບານຣັຖ ນຊວ ໃນເດືອນ ເມສາ (4) 2000 ແບບເປັນການທົດລອງນຶ່ງປີນັ້ນ ແລະໄດ້ຖືກຍືດເວລາ ຕໍ່ໄປອີກສອງປີ. ຄວາມຄິດລິເລີ້ມທີ່ໃຊ້ທົ່ວຣັຖ ນີ້ອຳນວຍ ໃຫ້ຕຳຣວດມີ ການຕັດສິນໃຈ ໃຫ້ການຕັກເຕືອນແທນການໃສ່ຂໍ້ຫາ ສຳລັບຜູ້ກະທຳຜິດເຣື່ອງກັນຊາສະຖານເບົາ.

**ໂຄງການນີ້ບໍ່ໄດ້ ເຮັດໃຫ້ການເສບກັນຊາ ເປັນຄວາມຜິດເບົາລົງ ຫລື ເຮັດໃຫ້ຖືກກົດຫມາຍ. ໃນຣັຖ ນຊວ ການໃຊ້, ການມີໃນຄອບຄອງ, ການປູກ, ການນຳເຂົ້າ ແລະ ການຂາຍກັນຊາ ຍັງເປັນ ສິ່ງທີ່ ຜິດກົດຫມາຍຢູ່.**

ຜູ້ໃຫຍ່ທີ່ຖືກຈັບ ໃນຄະດີມີ ໃບກັນຊາຈຳນວນນ້ອຍ (ບໍ່ຫລາຍກວ່າ 15 ກຣາມ) ແລະ/ຫລື ເຄື່ອງມື ສຳລັບໃຊ້ ໃນການສູບກັນຊາ ສາມາດໄດ້ຮັບຫນັງສື ແຈ້ງການຕັກເຕືອນ ຈາກຕຳຣວດ. ຫນັງສືແຈ້ງນີ້ ໃຫ້ຂໍ້ມູນເຣື່ອງອານາມັຍ ແລະ ກົດຫມາຍກ່ຽວກັບການໃຊ້ກັນຊາ ແລະ ຍັງໃຫ້ເບີໂທຣະສັບ ສຳລັບ ຕິດຕໍ່ຫາ ບໍຣິການຂໍ້ມູນເຣື່ອງເຫລົ້າ ແລະຢາເສບຕິດ (Alcohol and Drug Information Services – ADIS). ADIS (ບໍຣິການ 24 ຊົ່ວໂມງ ນຳເບີ 1800) ໄດ້ຂຍາຍ ບໍຣິການ ຂຶ້ນຕື່ມເພື່ອໃຫ້ບໍຣິການ ແກ່ຜູ້ກະທຳຜິດທີ່ໄດ້ຜ່ານການຕັກເຕືອນ ດ້ວຍຂໍ້ມູນກ່ຽວກັບການປິ່ນປົວ, ການໃຫ້ ຄຳປຶກສາຫາລື ແລະ ບໍຣິການການອູ້ມຊູທັງຫລາຍ. ໂຄງການນີ້ມີຄວາມຫມາຍວ່າ ຜູ້ກະທຳຄວາມຜິດເຣື່ອງກັນຊາສະຖານເບົາ ອາດຈະຫລີກຈາກການ ມີຄະດີ ອາຊຍາກັມ.

ເຈົ້າຫນ້າທີ່ ຈະໃຫ້ການຕັກເຕືອນ ພຽງສອງຄັ້ງເທົ່ານັ້ນ. ຜູ້ກະທຳຄວາມຜິດທີ່ໄດ້ຮັບ ການຕັກເຕືອນ ຄັ້ງທີສອງ ຈະຕ້ອງໄດ້ຮັບຄຳສັ່ງ ໃຫ້ໄປຫາ ການປຶກສາຫາລື ແລະ ການຮຽນ.

ຖ້າຫາກວ່າ ຜູ້ກະທຳຄວາມຜິດ ຍັງສືບຕໍ່ການໃຊ້ກັນຊາອີກ ແລະຖືກຕຳຣວດຈັບ ພວກເຂົາ ກໍຈະ ຖືກໃສ່ຂໍ້ຫາ ແລະ ຕ້ອງໄປຂຶ້ນສາລ.

ພວກທີ່ມີປວັດຄວາມຮຸນແຮງ, ການກະທຳຜິດກ່ຽວກັບເພດສຳພັນ ຫລືຢາເສບຕິດ ຈະບໍ່ໄດ້ຮັບການຕັກເຕືອນ.

*ເພື່ອເອົາຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ຫາ NSW Police Service ໂທຣະສັບ: (02) 9265 5185.*

## 3. ໂຄງການ ຜູ້ພິພາກສາແນະນຳສົ່ງໄປຫາການປິ່ນປົວແຕ່ຕົ້ນ* (Magistrate Early Referral into Treatment – MERIT*)

ໂຄງການ MERIT ແມ່ນຖືກຈັດຂຶ້ນ ສຳລັບ ພວກຈຳເລີຍ ທີ່ມີສິດໄດ້ຮັບການປະກັນຕົວ ແລະ ຜູ້ທີ່ ສະແດງ ຄວາມກະຕືລືລົ້ນໃນການປິ່ນປົວ ແລະການບຳບັດສຸຂະພາບ. MERIT ແນໃສ່ ການປ້ອງກັນຈຳເລີຍບໍ່ໃຫ້ກໍ່ອາຊຍາກັມ ແລະ ກັບຄືນໄປໃຊ້ ຢາເສບຕິດອີກດ້ວຍເຮັດໃຫ້ ການເຂົ້າຮ່ວມ ໃນໂຄງການປິ່ນປົວຢາເສບຕິດ ເປັນຂໍ້ນຶ່ງຂອງເງື່ອນໄຂ ການປະກັນຕົວ.

ໂຄງການນີ້ ໄດ້ຮັບຜົນສຳເລັດຈາກ ການທົດລອງມາແລ້ວ ທີ່ Lismore ແລະ ຈະຖືກນຳ ໄປຈັດນຳໃຊ້ ຕາມບໍຣິການ ອານາມັຍເຂດທຸກໆແຫ່ງໃນຣັຖ ນຊວ ພາຍໃນສອງປີຂ້າງຫນ້າ.

ພາຍໃຕ້ໂຄງການ MERIT ຜູ້ພິພາກສາ ແນະນຳສົ່ງ ພວກຈຳເລີຍ ໄປຫາໂຄງການປິ່ນປົວ ແລະ ການບຳບັດສຸຂະພາບ ແບບເປັນສ່ວນ ຂອງເງື່ອນໄຂ ການປະກັນຕົວຂອງພວກເຂົາ. MERIT ແມ່ນ ໂຄງການຕາມຄວາມສມັກໃຈ ແລະ ຄວາມກ້າວຫນ້າ ໃນການປິ່ນປົວ ຂອງຈຳເລີຍ ອາດຈະຖືກ ນຳມາພິຈາຣະນາ ໃນເວລາຂຶ້ນສານ ແລະ ໃນການຕັດສິນລົງໂທດ.

ພວກທີ່ເຂົ້າຮ່ວມຈະຖືກຄວບຄຸມເບິ່ງແຍງຢ່າງ ໃກ້ຊິດຕລອດລະຍະ ການປະກັນຕົວ ຂອງພວກເຂົາ ໂດຍຜູ້ຊ່ຽວຊານ ທີ່ໄດ້ຮັບການຝຶກຝົນດ້ານ ອານາມັຍແລະສົງເຄາະ ເປັນພິເສດ. ຜູ້ພິພາກສາຈະ ໄດ້ຮັບລາຍງານ ກ່ຽວກັບຄວາມກ້າວຫນ້າຂອງພວກເຂົາ ສມ່ຳສເມີ ຈົນກວ່າເຣື່ອງຂຶ້ນ ສາລຈະແລ້ວ ຕອນຫມົດລະຍະປະກັນຕົວ ຊຶ່ງຕາມປົກກະຕິແລ້ວແມ່ນ ສາມເດືອນ.

ພວກຈຳເລີຍທີ່ຖືກໃສ່ຂໍ້ຫາເຣື່ອງຄວາມຮຸນແຮງ ຫລື ກ່ຽວກັບເຣື່ອງເພດສຳພັນ ນັ້ນ ຈະບໍ່ຖືກຮວມເຂົ້າໃນໂຄງການນີ້.

## ໂຄງການ MERIT ເຮັດວຽກແບບໃດ?

ໂຄງການປິ່ນປົວຢາເສບຕິດຈະຖືກອອກແບບໃຫ້ແກ່ຜູ້ເຂົ້າຮ່ວມ. ພນັກງານອານາມັຍ ໃຫ້ບໍຣິການການອູ້ມຊູ ແລະ ຄຳແນະນຳຕລອດການປິ່ນປົວນີ້. ໂຄງການອາດຈະຮວມ:

- ການລ້າງຖອນພິດຢາເສບຕິດ
- ຢາ ເມທາໂດນ ຫລື ການປິ່ນປົວດ້ວຍ ຢາອື່ນໆ (ຢາຮັກສາສຳລັບຜູ້ທີ່ເພິ່ງຢາເສບຕິດ)
- ບ່ອນພັກສາໃສ ແລະ ໂຄງການບຳບັດສຸຂະພາບອື່ນໆ
- ການໃຫ້ຄຳປຶກສາຫາລືເປັນສ່ວນຕົວ ຫລື ເປັນກຸ່ມ
- ໂຄງການປ້ອງກັນການກັບຕົວ ເພື່ອປ້ອງກັນ ບໍ່ໃຫ້ຈຳເລີຍ ກັບໄປໃຊ້ຢາເສບຕິດອີກ.

ຖ້າຫາກວ່າ ຈຳເລີຍບໍ່ໄປຮັບການປິ່ນປົວ, ກໍ່ອາຊຍາກັມຕື່ມ, ຫລື ບໍ່ປະຕິບັດ ຕາມເງື່ອນໄຂ ຂອງ ການປະກັນຕົວ, ທາງການ ຈະແຈ້ງໃຫ້ຜູ້ພິພາກສາໄດ້ຮູ້ ແລະ ອາດຈະຢັບຢັ້ງ ໂຄງການນັ້ນ. ເມື່ອໂຄງການນັ້ນສຸດແລ້ວ ຜູ້ພິພາກສາອາດຈະ ພິຈາຣະນາ ເບິ່ງຂັ້ນ ຂອງຄວາມກ້າວຫນ້າ ຂອງ ຈຳເລີຍ ໃນການຕັດສິນລົງໂທດຄັ້ງສຸດທ້າຍ.

*ເພື່ອເອົາຂໍ້ມູນເພີ້ມຕື່ມຈົ່ງຕິດຕໍ່ຫາ NSW Attorney General's Department. ໂທຣະສັບ: (02) 9228 7620.*

*ປີເຕີຣ໌ ອາຍຸ 25 ປີ ແລະ ໄດ້ໃຊ້ເຮໂຣອິນມາ 9 ປີແລ້ວ. ປີເຕີຣຖືກ ຈັບຄະດີ ເຣື່ອງງັດແງະ ພົວພັນ ກັບການໃຊ້ຢາເສບຕິດຂອງລາວ. ຄັ້ງນີ້ ເປັນຄັ້ງທຳອິດ ທີ່ລາວໄປຂຶ້ນສາລ.*

*ຍ້ອນປວັດການໃຊ້ ຢາເສບຕິດຂອງລາວ, ປີເຕີຣ໌ ຖືກສົ່ງໄປຮັບ ການພິຈາຣະນາ ເພື່ອໄປຫາໂຄງການ MERIT. ບັນຫາ ຢາເສບຕິດ ຂອງປີເຕີຣ໌ ໄດ້ຖືກປະເມີນເບິ່ງ ໂດຍຜູ້ຊ່ຽວຊານ ດ້ານອານາມັຍ. ປີເຕີຣ໌ ຕົກລົງ ຮັບໄປຫາ ໂຄງການ ໃຊ້ຢາເມທາໂດນ ແລະ ເຂົ້າຮ່ວມກຸ່ມຮຽນ ຂອງໂຄງການ MERIT ແລະ ມີ ເວລາໄດ້ຮັບການປຶກສາຫາລື ກັບພນັກງານເບິ່ງແຍງເຣື່ອງ ສມ່ຳສເມີ. ໃນຂນະທີ່ ປີເຕີຣ໌ ເຂົ້າຮ່ວມໂຄງການ MERITນີ້ ເຣື່ອງໄປຂຶ້ນສາລ ກໍຖືກເລື່ອນອອກໄປ. ຜູ້ພິພາກສາ ໄດ້ຮັບລາຍງານ ເຣື່ອງການປະຕິບັດຕໍ່ MERIT ຂອງປີເຕີຣ໌ຢ່າງສມ່ຳສເມີ.*

*ປີເຕີຣ໌ ໄດ້ຈົບຈາກໂຄງການ MERIT ຢ່າງສົມຫວັງ ຫລັງຈາກເວລາ 15 ອາທິດ.*

*ເຣື່ອງຂຶ້ນສາລ ຂອງປີເຕີຣ໌ກໍຈະແລ້ວໃນໄວໆນີ້. ລາວໄດ້ຕັດສິນໃຈ ວ່າຈະຮັບ ສາຣະພາບ ວ່າຜິດແທ້. ລາຍງານ ກ່ຽວກັບ ຄວາມກ້າວຫນ້າໃນໂຄງການ MERIT ນັ້ນກໍຈະຖືກ ນຳມາສເນີຕໍ່ ຜູ້ພິພາກສາ ເພື່ອການພິຈາຣະນາ.*

*ໃນຂນະນີ້ ປີເຕີຣ໌ ໄດ້ເຮັດວຽກອັນຫມັ້ນຄົງ ແລະ ຍັງຢູ່ໃນໂຄງການ ຢາເມທາໂດນຢູ່.*

## 4. ສາລຢາເສບຕິດສຳລັບຜູ້ໃຫຍ່ (Adult Drug Court)

ສາລຢາເສບຕິດແຫ່ງທຳອິດ ໃນອອສເຕຣເລັຍໄດ້ຖືກເປີດຂຶ້ນ ທີ່ ເມືອງ ພາຣາມາຕາ ໃນເດືອນກຸມພາ 1999. ສາລຢາເສບຕິດ ມີເປົ້າຫມາຍ ຊ່ວຍເຫລືອ ຜູ້ໃຫຍ່ທີ່ ກະທຳຄວາມຜິດ, ຜູ້ທີ່ມີບັນຫາ ເຣື່ອງຢາເສບ ຕິດຫນັກ, ທຳລາຍ ກົງລໍ້ຂອງ ຢາເສບຕິດແລະອາຊຍາກັມ ດ້ວຍການມີໂຄງການປິ່ນປົວ ແລະ ບຳບັດສຸຂພາບ ທີ່ມີການຄວບຄຸມ.

ພວກຈຳເລີຍ ຈາກເຂດຕາເວັນຕົກຂອງຊິດນີ ສາມາດຖືກ ແນະນຳ ສົ່ງໂດຍສາລທ້ອງຖິ່ນ ໄປຫາສາລຢາເສບຕິດ ຂອງ ນຊວ. ພວກຈຳເລີຍ ຈະສາມາດ ເຂົ້າຮ່ວມ ໂຄງການນີ້ໄດ້ ຖ້າຫາກວ່າ ພວກເຂົາ:

- ເຂົ້າຮ່ວມໃນການລ້າງຖອນພິດ ຢາເສບຕິດ
- ມີຄວາມກະຕືລືລົ້ນໃນການບຳບັດສຸຂພາບ, ແລະ
- ບໍ່ເຄີຍຖືກໃສ່ຂໍ້ຫາ ເຣື່ອງຄວາມຮຸນແຮງ ຫລື ກ່ຽວກັບເພດສຳພັນ ຫລື ການກະທຳຜິດ ທີ່ເປັນອາຊຍາກັມ†.

## ສາລຢາເສບຕິດ ນຊວ ເຮັດວຽກແບບໃດ?

ຄນະທີມຂອງ ສາລຢາເສບຕິດ ໄດ້ຈັດໂຄງການ ແບບສ່ວນບຸກຄົນ ສຳລັບຜູ້ທີ່ເຂົ້າຮ່ວມ ທີ່ຄວາມດົນນານເຖິງ 12 ເດືອນ ຫລື ຫລາຍກວ່າ. ໂຄງການນີ້ ມີຄວາມສມ່ຳສເມີ ໃນການ:

- ປິ່ນປົວຢາເສບຕິດ ແລະ ການບຳບັດສຸຂພາບ
- ຮັບການປຶກສາຫາລື
- ສຶກສາ ແລະ ຝຶກຫັດວຽກ
- ກວດກອງເບິ່ງ ຢາເສບຕິດ
- ລາຍງານ ກັບໄປຫາສາລ.

ຜູ້ກຳກັບຄະດີ ຈະເປັນຜູ້ຄວບຄມຜູ້ເຂົ້າຮ່ວມແຕ່ລະຄົນ. ຜູ້ພິພາກສາ ແລະ ຄນະທີມ ຂອງສາລ ຢາເສບຕິດ ຄວບຄຸມເບິ່ງຄວາມກ້າວຫນ້າຂອງ ແຕ່ລະບຸກຄົນ ແລະ ອາດຈະ ປ່ຽນແປງ ຫລື ຢຸດໂຄງການນັ້ນ ຖ້າຫາກວ່າມີຄວາມຕ້ອງການ.

ໃນບັ້ນທ້າຍຂອງໂຄງການ ຜູ້ກະທຳຄວາມຜິດ ຈະໄດ້ຮັບ ການຕັດສິນ ລົງໂທດ ຄັ້ງສຸດທ້າຍ ຈາກ ສາລຢາເສບຕິດ. ການຕັດສິນນີ້ ຈະນຳເອົາການລົງໂທດ ອັນເກົ່າ ແລະ ຄວາມກ້າວຫນ້າ ຢູ່ໃນ ໂຄງການສາລຢາເສບຕິດຂອງພວກເຂົາມາພິຈາຣະນານຳ.

*ເພື່ອເອົາຂໍ້ມູນເພີ້ມຕື່ມຈົ່ງຕິດຕໍ່ຫາ NSW Attorney General Department. ໂທຣະສັບ: (02) 9228 7620.*

† ການກະທຳຜິດກ່ຽວກັບເສບຕິດທີ່ຕ້ອງຖືກເກາະຕົວຂຶ້ນສາລອາຍາທັງຫມົດນັ້ນ ຈະບໍ່ຖືກສົ່ງໄປຫາສາລທ້ອງຖິ່ນ.

*ແອນເດຣັຍ ມີອາຍຸ 39 ປີໃນຕອນທີ່ລາວໄປຂຶ້ນ ສາລຢາເສບ ຕິດຄັ້ງທຳອິດ. ລາວເປັນ ແມ່ແບບໂສດ (single mother) ທີ່ມີລູກສາມຄົນ ຊຶ່ງສ່ວນຫລາຍແມ່ນ ໃຊ້ຊີວິດຢູ່ກັບແມ່ເຖົ້າ.*

*ແອນເດຣັຍ ອອກຈາກໂຮງຮຽນມັທຍົມ ເມື່ອອາຍຸ 15 ປີ ແລະ ໄດ້ເຮັດວຽກແບບຢຸດໆເຮັດໆ ຢູ່ໃນ ຊຸບເປີມາເກັດ ແລະ ຕາມປັ້ມນ້ຳມັນ ຫລາຍແຫ່ງ.*

*ແອນເດຣັຍ ມີປະຫວັດ ອາຊຍາກັມ ອັນ ຍືດຍາວ ແລະ ໄດ້ເຄີຍໃຊ້ເວລາ ທັງຢູ່ໃນສະຖານກັກກັນຊາວຫນຸ່ມ ແລະ ຄຸກຜູ້ໃຫຍ່ມາແລ້ວ. ການກະທຳຜິດ ຂອງລາວນັ້ນແຕກຕ່າງກັນໄປ ແຕ່ວ່າຫມົດທຸກອັນ ກໍພົວພັນກັບການໃຊ້ ຢາເສບຕິດ ຂອງລາວ. ແອນເດຣັຍໄດ້ເລີ້ມ ໃຊ້ຢາເສບຕິດ ຕອນລາວມີອາຍຸໄດ້ 13 ປີ*

*ແລະ ໄດ້ມີການຕິດ ເຮໂຣອິນ ຢ່າງເຫັນໄດ້ຊັດແຈ້ງ ຕັ້ງແຕ່ລາວອາຍຸ 16 ປີ. ລາວເຄີຍລອງ ການປິ່ນປົວແບບໃຊ້ ຢາເມທາໂດນ ມາແລ້ວ ແຕ່ຍ້ອນວ່າ ວິຖີຊີວິດຂອງ ລາວຫຍຸ້ງຫລາຍ (ບໍ່ມີວຽກງານ ຫລື*

*ທີ່ຢູ່ປະຈຳ) ຈຶ່ງເຮັດໃຫ້ລາວຍາກທີ່ຈະຢູ່ກັບໂຄງການໃດໂຄງການນຶ່ງ. ແອນເດຣັຍ ເວົ້າວ່າ ລາວມີແຕ່ໝູ່ທີ່ຕິດຢາເສບຕິດ ແລະພົວພັນກັບອາຊຍາກັມເທົ່ານັ້ນ.*

*ແອນເດຣັຍ ໄດ້ໄປປາກົດຕົວຕໍ່ໜ້າ ຜູ້ພິພາກສາ ໃນຂໍ້ຫາມີຢາໃນຄວາມຄອບຄອງ. ລາວໄດ້ຮັບໂທດເປັນ ການຈຳຄຸກເປັນເວລາສາມເດືອນ ແລະນຶ່ງອາທິດ.*

*ການລົງໂທດ ຂອງລາວ ໄດ້ຖືກໂຈະໄວ້ກ່ອນ ເພື່ອໃຫ້ເວລາລາວເຂົ້າຮ່ວມໃນ ໂຄງການສາລ ຢາເສບຕິດ. ໃນລະຍະທີ່ລາວຢູ່ໃນໂຄງການສາລຢາເສບຕິດ ລາວພັກຢູ່ກັບຄອບຄົວຂອງລາວ ຮວມທັງລູກສາມຄົນຂອງລາວ. ແມ່ຂອງລາວ ໃຫ້ຄວາມອູ້ມຊູແກ່ລາວຢ່າງໃຫຍ່ຫລວງ.*

*ແອນເດຣັຍ ເຄີຍມີບັນຫາຕົ້ນຕໍ ໃນການປັບຕົວເຂົ້າກັບສະພາບປະຈຳວັນຂອງຄອບຄົວ ແຕ່ວ່າ ລາວກໍສາມາດເອົາຊນະໃນການປຶກສາຫາລື. ລາວຮຽນຈົບວິຊາທີ່ໃຊ້ເວລາ 18 ອາທິດຈາກ TAFE ແລະ ໄດ້ຕັດການຕິດຕໍ່ກັບພວກໝູ່ເກົ່າຂອງລາວແລ້ວ.*

*ແອນເດຣັຍ ໄດ້ຈົບຈາກໂຄງການສາລຢາເສບຕິດ ດ້ວຍຄວາມສຳເຣັດ. ນັບຕັ້ງແຕ່ຈົບມາ ລາວກໍຍັງໄດ້ຕິດຕໍ່ກັບຜູ້ຈັດການເບິ່ງແຍງເຣື່ອງລາວ ແລະ ຜູ້ໃຫ້ຄຳປຶກສາຫາລືສເມີ ແລະ ຢູ່ແບບປາສຈາກຢາເສບຕິດ.*

## 5. ສາລຢາເສບຕິດສຳລັບຜູ້ເຍົາວັຍ* (Youth Drug Court*)

ການທົດລອງ ສາລຢາເສບຕິດເປັນເວລາສອງປີ ໄດ້ເລີ້ມຂຶ້ນເມື່ອເດືອນກໍຣະກະດາ (7) 2000 ຢູ່ ເຂດຕາເວັນຕົກ ຂອງເມືອງຊິດນີ. ຜູ້ເຍົາວັຍທີ່ກະທຳຄວາມຜິດ ຢູ່ສາລເດັກ ສາມາດ ຖືກແນະນຳ ສົ່ງໄປຫາສາລຢາເສບຕິດສຳລັບຜູ້ເຍົາວັຍ ໄດ້ຖ້າຫາກພວກເຂົາ:

- ມີບັນຫາໜັກເຣື່ອງຢາເສບຕິດ ຫລື ເຫລົ້າ
- ສາຣະພາບວ່າເຮັດຜິດ
- ຢູ່ໃນເຂດຕາເວັນຕົກຂອງເມືອງຊິດນີ
- ທາງການ ບໍ່ສາມາດໃຊ້ ກົດໝາຍຜູ້ເຍົາວັຍ ໄດ້
- ເໝາະສົມສຳລັບການປິ່ນປົວ ແລະ ບຳບັດສຸຂພາບ
- ຕົກລົງວ່າ ຈະເຂົ້າຮັບການປິ່ນປົວ ໃນຂນະທີ່ຢູ່ລະຫວ່າງການປະກັນຕົວ.

### ສາລຢາເສບຕິດສຳລັບຜູ້ເຍົາວັຍເຮັດວຽກແບບໃດ?

ທາງການ ຈະຈັດໂຄງການສຳລັບສ່ວນບຸກຄົນ ໃຫ້ຜູ້ເຍົາທີ່ໄດ້ກະທຳຜິດ ທີ່ພວກເຂົາ ຕ້ອງເຮັດຕາມ. ໂຄງການນີ້ ມີຣະຍະຍາວຫົກເດືອນ ຫລື ຫລາຍກວ່າ ແລະ ຮວມເອົາ ກຳນົດການປິ່ນປົວ, ການນັດໝາຍກັບສາລຢ່າງສມ່ຳສເມີ ແລະ ການຊ່ວຍເຫລືອດ້ານອານາມັຍ, ບ່ອນພັກອາສັຍ ແລະ ການສຶກສາ. ພນັກງານອູ້ມຊູຈະໃຫ້ຄວາມຊ່ວຍເຫລືອ ຜູ້ທີ່ເຂົ້າຮ່ວມໃນດ້ານເບິ່ງແຜນຂອງໂຄງການ. ທາງຄອບຄົວ ກໍຖືກສນັບສນູນ ໃຫ້ມີສ່ວນຮ່ວມໃນໂຄງການປິ່ນປົວນີ້.

ແຜນຂອງໂຄງການສາມາດຖືກສັ່ງຢຸດໄດ້ ຖ້າຫາກວ່າ ຜູ້ເຍົານັ້ນຫາກສືບຕໍ່ການໃຊ້ຢາເສບຕິດ ແລະເຫລົ້າ ຫລື ເຮັດຄວາມຜິດອື່ນໆອີກ. ໃນບັ້ນທ້າຍຂອງ ໂຄງການນັ້ນ ຖ້າຫາກ ຜູ້ເຍົາຫາກ ບໍ່ຈົບໂຄງການນີ້ ພວກເຂົາ ກໍຈະຖືກສົ່ງກັບໄປຫາສາລ ຕາມຂໍ້ຫາເກົ່າ. ໃນບັ້ນທ້າຍຂອງ ໂຄງການນັ້ນ ການເຂົ້າຮ່ວມ ແລະ ຄວາມກ້າວໜ້າຂອງເຂົາກໍຈະຖືກນຳໄປພິຈາຣະນາ ໃນເວລາຕັດສິນລົງໂທດຄັ້ງສຸດທ້າຍ.

*ເພື່ອເອົາຂໍ້ມູນເພີ້ມຕື່ມ ຈົ່ງຕິດຕໍ່ຫາ NSW Attorney General Department. ໂທຣະສັບ: (02) 9228 7620.*

*ແມັກຊ໌ອາຍຸ 17 ປີ ໄດ້ມີບັນຫາຫລາຍ ໃນຊີວິດຂອງລາວ ເມື່ອລາວ ຖືກແນະນຳສົ່ງໄປຫາສາລຢາເສບຕິດສຳລັບັບຜູ້ເຍົາ. ລາວສູບເຮໂຣອິນ ມີຄ່າເກືອບ $50 ຕໍ່ມື້, ກໍ່ການກະທຳຜິດຫລາຍເພື່ອໃຫ້ໄດ້ເງິນມາໃຊ້ໃນການໃຊ້ຢາເສບຕິດຂອງລາວ, ບໍ່ໄດ້ມີການຕິດຕໍ່ກັບຄອບຄົວ ຫລາຍກວ່າຫ້າປີ ແລະບໍ່ມີບ່ອນຢູ່ປະຈຳ.*

*ຫລັງຈາກການປະເມີນເບິ່ງ ບັນຫາຢາເສບຕິດຂອງລາວແລ້ວ ທາງການໄດ້ຈັດແຜນເບິ່ງແຍງສ່ວນບຸກຄົນ ໃຫ້ລາວ ຊຶ່ງລາວຕ້ອງໄປຫາ ຜູ້ໃຫ້ຄຳປຶກສາຫາລື ແບບສມ່ຳສເມີ ແລະ ຫາບ່ອນຢູ່ປະຈຳ. ລາວກັບໄປຫາຄອບຄົວຂອງລາວ ແລະ ປະຕິບັດຕາມເງື່ອນໄຂຂອງການປະກັນຕົວ ແລະການຄວບຄຸມຢ່າງ ເຄັ່ງຄັດ.*

*ໃນຂນະທີ່ຢູ່ໃນໂຄງການນີ້ ລາວໄດ້ຈົດຊື່ຮຽນທີ່ TAFE ແລະໄດ້ຮັບໃບປະກາສນີຍາບັດດ້ານ Information Technology.*

*ໃນຂນະທີ່ ລາວສະແດງຄວາມກ້າວໜ້ານັ້ນ, ເງື່ອນໄຂການປະກັນຕົວຂອງແມັກຊ໌ ກໍເບົາລົງ ແລະ ການລາຍງານປະຈຳກໍໄດ້ຫລຸດຜ່ອນໜ້ອຍລົງ. ລາວໄດ້ຮັບອະນຸຍາດ ໃຫ້ເດີນທາງຕາມຣົຖໄຟ ໄດ້ໂດຍບໍ່ຕ້ອງມີຄົນຄຸມ ແລະ ກຳນົດຈຳກັດເວລາຂອງລາວ ກໍຖືກຍົກເລີກ.*

*ຫລັງຈາກຫົກເດືອນ ແມັກຊ໌ ກໍເຖິງເວລາ ທີ່ຈະຈົບຈາກໂຄງການນີ້ໆ ແຕ່ລາວເລືອກວ່າຈະຢູ່ນຳໂຄງການນີ້ຕໍ່ໄປ ອີກສາມເດືອນເພື່ອວ່າລາວຈະໄດ້ຮຽນຈົບຂັ້ນປະກາສນີຍາບັດ ຂັ້ນສອງ ຂອງວິຊາ Information Technology ກ່ອນທີ່ລາວຈະກັບໄປຂຶ້ນສາລເພື່ອການຕັດສິນລົງໂທດ.*

*ນັບຕັ້ງແຕ່ໄດ້ຖືກຮັບເຂົ້າໃນໂຄງການີ້ໆ ແມັກຊ໌ບໍ່ໄດ້ກະທຳຄວາມຜິດອີກເລີຍ ຫລື ບໍ່ມີລາຍງານວ່າ ລາວກັບໄປໃຊ້ຢາເສບຕິດອີກເລີຍ.*

* ພາຍໃຕ້ຄວາມຄິດລິເລີ້ມໃນການຜັນປ່ຽນທິດທາງຢາເສບຕິດ–ອາຊຍາກັມ (Illicit Drug Diversion Initiative) ຂອງກອງປະຊຸມຮ່ວມຣັຖບານອອສເຕຣລຽນ, ຣັຖບານກາງ ໄດ້ບໍຣິຈາກເງິນເຂົ້າຊ່ວຍໃນຄວາມຄິດການຜັນປ່ຽນນີ້.

*Produced by the Community Drug Information Strategy, NSW Premier’s Department.*